ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===== xxxx =====------

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1710 /ອຄ.ຄພນ.

ນະຄອນຫຼວງວຽງຈັນ,ວັນທີ 20 ສິງຫາ 2012

# ແຈ້ງການ

ເຖິງ: ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ໃຫ້ຄຸ້ມຄອງການເກັບຊື້ເຂົ້າຢູ່ພາຍໃນແຂວງ.

- ອີງຕາມກົດໝາຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມ ດຳລັດ ສະບັບເລກທີ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

ເຂົ້າແມ່ນໜຶ່ງລາຍການສິນຄ້າທີ່ລັດຄຸ້ມຄອງ ແລະ ດູນດ່ຽງໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມພາຍໃນປະເທດ. ເພື່ອຮັກສາສະຖຽນລະພາບທາງດ້ານເສດຖະກິດໃຫ້ໝັ້ນຄົງ, ບໍ່ໃຫ້ມີຜົນກະທົບໄປສູ່ບັນຫາອື່ນ ທີ່ຈະກາຍເປັນການຫຍໍ້ທໍ້ໃນສັງຄົມເວົ້າລວມ, ເວົ້າສະເພາະຜູ້ປະກອບການ ກໍຄືກຸ່ມ ຫຼື ສະມາຄົມໂຮງສີ ທີ່ໄດ້ລົງຊຸກຍູ້ສົ່ງເສີມ ດ້ວຍການເຮັດສັນຍາຜູກພັນສອງສົ້ນກັບຊາວນາ ຫຼື ກຸ່ມຊາວນາ ທີ່ໄດ້ຄ້ຳປະກັນລາຄາກັນໄວ້, ຫຼີກລ້ຽງການເອົາລັດເອົາປຽບຈາກພໍ່ຄ້າມືກາງ ທີ່ສ້າງຄວາມປັ່ນປ່ວນທາງດ້ານລາຄາເກັບຊື້ເຂົ້າ ຄືຊຸມປີຜ່ານມາ.

**ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ປະຕິບັດ ດັ່ງນີ້:**

1. ໃຫ້ເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະ ຕິດຕາມ-ກວດກາ ຢ່າງເຂັ້ມງວດ ຫ້າມເດັດຂາດບໍ່ໃຫ້ພໍ່ຄ້າຊາວຕ່າງປະເທດເຂົ້າມາເກັບຊື້ເຂົ້າຢູ່ພາຍໃນແຂວງ ແລະ ປັ່ນປ່ວນລາຄາເຂົ້າ ໂດຍບໍ່ມີໃບທະບຽນວິສາຫະກິດຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ. ຖ້າພົບເຫັນໃນກໍລະນີມີການລະເມີດດັ່ງກ່າວແມ່ນໃຫ້ຍຶດ ຫຼື ອາຍັດ ແລະ ປັບໃໝ ຕາມລະບຽບກົດໝາຍທີ່ວາງອອກ;
2. ຫ້າມບໍ່ໃຫ້ບຸກຄົນ, ຫົວໜ່ວຍທຸລະກິດ ຫຼື ໂຮງສີຕ່າງໆ ຢູ່ພາຍໃນແຂວງ ເປັນຕົວແທນເກັບຊື້ເຂົ້າໃຫ້ຊາວຕ່າງປະເທດ ໂດຍອາໃສໃບທະບຽນວິສາຫະກິດຂອງຄົນລາວ ຫຼື ເອົາເງິນທຶນ

ໃຫ້ພື່ອກັກຕຸນສິນຄ້າ ແລະ ສ້າງຄວາມປັ່ນປ່ວນທາງດ້ານລາຄາຊື້-ຂາຍເຂົ້າ, ຖ້າພົບເຫັນການກະທຳທີ່ດັ່ງກ່າວແມ່ນໃຫ້ຢຶດ ຫຼື ອາຍັດ ແລະ ປັບໃໝ ຕາມລະບຽບກົດໝາຍຂອງ ສປປ ລາວ ວາງອອກຢ່າງເຂັ້ມງວດ;

3. ຜູ້ທີ່ມີສິດເກັບຊື້ເຂົ້າຈາກຊາວນາ ຫຼື ກຸ່ມຊາວນາໄດ້ ຕ້ອງແມ່ນສະມາຄົມ/ກຸ່ມໂຮງສີ ຫຼື ທຸລະກິດຊື້-ຂາຍເຂົ້າ ທີ່ມີໃບທະບຽນໂດຍຖືກຕ້ອງເທົ່ານັ້ນ. ສະນັ້ນ, ຖ້າແຂວງໃດບໍ່ທັນມີ ກໍໃຫ້ເປັນເຈົ້າການຮີບຮ້ອນຈັດຕັ້ງກຸ່ມ ຫຼື ສະມາ ຄົມດັ່ງກ່າວຂຶ້ນ; ສ່ວນການເກັບຊື້ເຂົ້າຂອງພາກສ່ວນຕ່າງໆ ເຊັ່ນ: ການເກັບຊື້ເຂົ້າຂອງສອງກຳລັງ (ປກສ-ປກຊ), ອົງການຈັດຕັ້ງສາກົນຕ່າງໆ ແລະ ທຸກຮູບແບບການເກັບຊື້ແມ່ນຕ້ອງພົວພັນຊື້ນຳກຸ່ມໂຮງສີ ຫຼື ສະມາຄົມໂຮງສີຂອງແຂວງໂດຍກົງ, ບົນພື້ນຖານການຄຸ້ມຄອງ ແລະ ຢັ້ງຢືນຈາກພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ທັງນີ້ກໍເພື່ອໃຫ້ຂະແໜງການສາມາດເກັບກຳໄດ້ສະພາບຄວາມເປັນຈິງຂອງລາຄາ ແລະ ການຊື້-ຂາຍເຂົ້າຢູ່ພາຍໃນແຂວງຂອງຕົນ;

4. ໃຫ້ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ກ່ຽວກັບມີຊາວຕ່າງປະເທດຈຳນວນໜຶ່ງ ເຂົ້າມາດຳເນີນທຸລະກິດ ແລະ ໄດ້ສຳປະທານເນື້ອທີ່ດິນນາຂອງຊາວນາ (ຄົນລາວ) ເຮັດການຜະລິດເຂົ້າ ເພື່ອຂາຍໃຫ້ໂຮງສີຢູ່ພາຍໃນ ແລະ ສົ່ງອອກຈຳນວນໜຶ່ງ, ວ່າມີຈຳນວນເທົ່າໃດ; ມີປະເທດໃດ ແລະ ອື່ນໆ. ທັງນີ້ກໍເພື່ອໃຫ້ກຳໄດ້ສະພາບ ແລະ ເປັນຂໍ້ມູນລາຍງານຕໍ່ຂັ້ນເທິງ ກໍຄືອຳນາດການປົກຄອງແຂວງຮັບຊາບ ເພື່ອຊອກຫາວິທີແກ້ໄຂ ໃຫ້ທັນກັບສະພາບການ;

5. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຄຳສັ່ງ, ລະບຽບການ ແລະ ແຈ້ງການ ທີ່ອອກໃນເມື່ອກ່ອນ ທີ່ຂັດກັບແຈ້ງການສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ;

ລັດຖະມົນຕີ

ສົງວສະຫວາດ ສະແຫວງສຶກສາ

ບ່ອນນຳສົ່ງ:
- ຫ້ອງວ່າການສູນກາງພັກ (ເພື່ອຮັບຊາບ);
- ຫ້ອງວ່າການລັດຖະບານ (ເພື່ອຮັບຊາບ);
- ຄະນະນຳກະຊວງ ອຄ (ເພື່ອຮັບຊາບ);
- ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ);
- ພະແນກ ອຄ ແຂວງ, ນະຄອນຫຼວງ (ເພື່ອຈັດຕັ້ງປະຕິບັດ);
- ຫ້ອງການ, ສະຖາບັນ ແລະ ບັນດາກົມ ອ້ອມຂ້າງກະຊວງ ອຄ (ເພື່ອຮັບຊາບ);
- ສຳເນົາ.